ໂອບາດີຢາ

1 ນິມິດຂອງໂອບາດີ ພຣະເຈົ້າກ່າວດ້ວຍເຣື່ອງ ເອໂດມດັ່ງນີ້ວ່າ ເຮົາໄດ້ຍິນຂ່າວຈາກພຣະຜູ້ເປັນເຈົ້າ ທູດ
ຄົນນຶ່ງຖືກສົ່ງໄປໃນຖ້ຳມກາງບັນດາປະຊາຊາດໃຫ້ເວົ້າວ່າ, "ຈົ່ງລຸກຂຶ້ນເຖີດ ໃຫ້ເຮົາລຸກໄປທຳສົງຄາມກັບ
ເມືອງເອໂດມ"

2 ເບິ່ງແມ່, ເຮົາຈະກະທຳເຈົ້າໃຫ້ນ້ອຍຖ້ຳມກາງບັນດາປະຊາຊາດ ໃຫ້ເຈົ້າເປັນທີ່ດູຫມິ່ນຢ່າງມາກ

3 ຄວາມອວດອົ່ງແຫ່ງໃຈຂອງເຈົ້າໄດ້ລໍ້ລວງເຈົ້າເອງ ເຈົ້າຜູ້ຊຶ່ງອາໄສຢູ່ໃນຊອກຫີນທີ່ອາໄສຂອງເຈົ້າຢູ່ສູງ
ເຈົ້າຄິດຢູ່ໃນໃຈວ່າ, "ຜູ້ໃດຈະໃຫ້ເຮົາລົງມາຍັງພື້ນດິນ"

4 ເຖິງວ່າເຈົ້າເຫີນຂຶ້ນໄປສູງເຫມືອນນົກອິນຊີ ເຖິງວ່າຮັງຂອງເຈົ້າຢູ່ໃນຫມູ່ດວງດາວທັງຫລາຍ ເຮົາຈະດຶງ
ເຈົ້າລົງມາຈາກທີ່ນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

5 ຖ້າຂະໂມຍເຂົ້າມາຫາເຈົ້າ ຖ້າພວກປຸ້ນເຂົ້າມາໃນເວລາກາງຄືນ (ເຈົ້າຖືກທຳລາຍຫມົດກ້ຽງແບບໃດ) ເຂົາ
ຈະບໍ່ຂະໂມຍພຽງພໍແກ່ຕົວຂອງເຂົາເທົ່ານັ້ນຫລື ຖ້າຄົນເກັບອະງຸ່ນມາຫາເຈົ້າ ເຂົາຈະບໍ່ຖິ້ມອະງຸ່ນປະໄວ້
ຫນ້ອຍດຽວຫລື?

6 ເອຊາວໄດ້ຖືກປຸ້ນຢ່າງຮ້າຍແຮງແລ້ວແບບໃດຫນໍ ຊັບສົມບັດກໍຖືກຄົ້ນໄປຫມົດ

7 ພັນທະມິດທັງຫມົດຂອງເຈົ້າໄດ້ລໍ້ລວງເຈົ້າ ເຂົາໄດ້ໄລ່ເຈົ້າໄປເຖິງເຂດແດນ ພວກເຂົາໄດ້ກັບສູ້ຊະນະເຈົ້າ
ເສັງແລ້ວ ມິດທີ່ກິນເຂົ້າຫມໍ້ດຽວກັນກັບເຈົ້າກໍຫ້າງແຮ້ວດັກຈັບເຈົ້າ ເຣື່ອງນີ້ບໍ່ມີໃຜເຂົ້າໃຈອັນໃດເລີຍ

8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, ໃນວັນນັ້ນ ເຮົາຈະບໍ່ທຳລາຍຄົນສລາດໃຫ້ສິ້ນໄປຈາກເອໂດມ ແລະທຳລາຍ
ຄວາມເຂົ້າໃຈເສັງຈາກພູເຂົາເອຊາວຫລື

9 ນັກຮົບຂອງເຕມານຈະສະທ້ານຢ້ານກົວ ດັ່ງນັ້ນແຫລະ ທຸກຄົນທີ່ມາຈາກພູເຂົາເອຊາວຈະຖືກຕັດຂາດ
ເສັງດ້ວຍການສັງຫານ

10 ຍ້ອນວ່າຄວາມທຳຮຸນທີ່ກະທຳແກ່ຢາໂຄບນ້ອງຊາຍຂອງເຈົ້າ ຄວາມອັບອາຍຈະຄຸມເຈົ້າໄວ້ ເຈົ້າຈະຕ້ອງ
ຖືກຕັດຂາດອອກໄປເປັນນິດ

11 ໃນວັນທີ່ເຈົ້າຢືນຊື່ ໃນວັນທີ່ຄົນຕ່າງດ້າວເອົາຊັບສົມບັດຂອງເຂົາໄປ ແລະຄົນຕ່າງຊາດເຂົ້າມາທາງປະຕູ
ເມືອງ ເຂົາຈັບສລາກເອົາກຸງເຢຣູຊາເລັມກັນ ເຈົ້າກໍເຫມືອນຄົນເຫລົ່ານັ້ນຄົນນຶ່ງ

12 ເຈົ້າບໍ່ຄວນຢືນຍິ້ມຢູ່ດ້ວຍຄວາມພໍໃຈ ໃນເມື່ອນ້ອງຊາຍຂອງເຈົ້າຮັບເຄາະໃນຄັ້ງນັ້ນ ເຈົ້າບໍ່ຄວນຍິນດີເຍີ້ຍ
ປະຊາຊົນຢູດາ ໃນເມື່ອເຂົາທັງຫລາຍຖືກທຳລາຍເຈົ້າບໍ່ຄວນຈະໂອ້ອວດໃນວັນທີ່ເຂົາຕົກທຸກໄດ້ຍາກ

13 ເຈົ້າບໍ່ຄວນເຂົ້າປະຕູເມືອງແຫ່ງປະຊາຊົນຂອງເຮົາ ໃນວັນນັ້ນ ເມື່ອເຂົາຖືກທຳລາຍ ເຈົ້າບໍ່ຄວນຢືນຍິ້ມຢູ່
ໃນເຣື່ອງໄພວິບັດຂອງເຂົາ ໃນວັນນັ້ນ ເມື່ອເຂົາຖືກທຳລາຍເຈົ້າບໍ່ຄວນຈະເຂົ້າຍຶດຊັບສົນຂອງເຂົາໄປ ໃນ
ວັນນັ້ນເຂົາຖືກທຳລາຍ

14 ເຈົ້າບໍ່ຄວນຈະຍືນຕັນທາງແຍກຂອງເຂົາ ເພື່ອຈະດັກຈັບພວກຫລົບຫນີຂອງເຂົາ ເຈົ້າບໍ່ຄວນມອບຜູ້ທີ່ລອດ
ມາໄດ້ໃຫ້ແກ່ສັດຕຣູຂອງເຂົາ ໃນວັນທີ່ເຂົາຕົກທຸກໄດ້ຍາກ
15 ເພາະວັນແຫ່ງພຣະຜູ້ເປັນເຈົ້າໃກ້ປະຊາຊາດທັງສິ້ນເຂົ້າມາແລ້ວ ເຈົ້າກະທຳແກ່ເຂົາຢ່າງໃດ ກໍຈະມີຜູ້ມາ
ກະທຳແກ່ເຈົ້າຢ່າງນັ້ນ ການກະທຳຂອງເຈົ້າຈະກັບມາຕົກເທິງຫົວຂອງເຈົ້າເອງ
16 ເຈົ້າດື່ມຢູ່ເທິງພູເຂົາບໍຣິສຸດຂອງເຮົາສັນໃດ ປະຊາຊາດທີ່ຢູ່ລ້ອມຮອບທັງສິ້ນກໍຈະດື່ມສັນນັ້ນ ເຂົາຈະດື່ມ
ແລ້ວກໍໂອນເອນໄປເຂົາຈະເປັນເຫມືອນຢ່າງທີ່ບໍ່ເຄີຍເກີດມາ
17 ແຕ່ຈະມີຄົນລອດພົ້ນໃນພູເຂົາຊີໂອນ ແລະທີ່ນັ້ນຈະບໍຣິສຸດ ແລະເຊື້ອສາຍຂອງຢາໂຄບຈະຖືກຳມະສິດທີ່
ດີນອັນເປັນກຳມະສິດຂອງເຂົາ
18 ເຊື້ອສາຍຂອງຢາໂຄບຈະເປັນໄຟ ເຊື້ອສາຍຂອງໂຢເຊັບຈະເປັນແປວໄຟ ແລະເຊື້ອສາຍຂອງເອຊາວຈະ
ເປັນຕໍເຂົ້າ ໄຟແລະແປວໄຟຈະໄຫມ້ແລະເຜົາຜານເສັ່ງ ເຊື້ອສາຍຂອງເອຊາວຈະບໍ່ມີໃຜລອດໄດ້ເລີຍ
ເພາະວ່າພຣະຜູ້ເປັນເຈົ້າໄດ້ສັ່ນພຣະວາຈາແລ້ວ
19 ຄົນເຫລົ່ານັ້ນທີ່ຢູ່ໃນເນເກັບຈະໄດ້ພູເຂົາເອຊາວເປັນກຳມະສິດ ຄົນເຫລົ່ານັ້ນທີ່ຢູ່ໃນເນີນເຊເຟລາຈະໄດ້
ແຜ່ນດິນຟີລິສຕິນ ເຂົາຈະໄດ້ແຜ່ນດິນເອ
ຟຣາອິມ ແລະແຜ່ນດິນຊາມາເຮັງເປັນກຳມະສິດ ແລະເບັນຢາມິນຈະໄດ້ກີເລອາດເປັນກຳມະສິດ
20 ຈາກທິດເຫນືອ ພົນໂຍທາຂອງອິສຣາເອນທີ່ເປັນຊະເລີຍຈະໄດ້ໂຟນີເຊັ່ງໄກໄປຈົນເຖິງຊາເຣຟັທເປັນກຳມະ
ສິດ ສ່ວນພວກຊະເລີຍຊາວເຢຣູຊາເລັມທີ່ຢູ່ໃນເຊຟາຣາດຈະໄດ້ຫົວເມືອງເນເກັບເປັນກຳມະສິດ
21 ພວກກູ້ຊາດຈະຂຶ້ນໄປທີ່ພູເຂົາຊີໂອນເພື່ອປົກຄອງພູເຂົາເອຊາວ ແລະຣາຊອານາຈັກນັ້ນຈະຕົກເປັນຂອງ
ພຣະຜູ້ເປັນເຈົ້າ